ກະຊວງວິທະຍາສາດແລະເຕັກໂນໂລຊີ
ຂາເຂົ້າ
ເລກທີ 0209 ກວຕ
ລົງວັນທີ 28 JAN 2014
ເວລາ 11.43
ສົ່ງເຖິງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ນາຍົກລັດຖະມົນຕີ  ເລກທີ 35 /ນຍ.

ນະຄອນຫລວງວຽງຈັນ, ວັນທີ 28. 1. 2014

# ດຳລັດ

## ວ່າດ້ວຍການສ້າງຕັ້ງກົມໃຫຍ່ເຕັກນິກ ກອງທັບປະຊາຊົນລາວ

– ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2013.

– ອີງຕາມໜັງສືສະເໜີຂອງ ກະຊວງປ້ອງກັນປະເທດ ສະບັບເລກທີ 69/ກປທ, ລົງວັນທີ 09 ມັງກອນ 2014.

## ນາຍົກລັດຖະມົນຕີ ອອກດຳລັດ :

<u>ມາດຕາ 1</u>: ອະນຸມັດໃຫ້ສ້າງຕັ້ງ ກົມໃຫຍ່ເຕັກນິກກອງທັບ (ອັກສອນຫຍໍ້ : ກຕນ ) ຢູ່ພາຍໃຕ້ການຊີ້ນຳ-ນຳພາ ໂດຍກົງ ແລະ ຮອບດ້ານຂອງກະຊວງປ້ອງກັນປະເທດ.

<u>ມາດຕາ 2</u>: ກົມໃຫຍ່ເຕັກນິກກອງທັບ ມີໜ້າທີ່ນຳພາ ແລະ ບັນຊາສູງສຸດດ້ານວຽກງານເຕັກນິກ-ອຸດສາຫະກຳປ້ອງກັນຊາດ.

<u>ມາດຕາ 3</u>: ມອບໃຫ້ລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດ ອອກຂໍ້ຕົກລົງກຳນົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ສິດ, ພ້ອມທັງຕົກລົງແຕ່ງຕັ້ງບຸກຄະລາກອນ ເພື່ອປະກອບເຂົ້າໃນການຈັດຕັ້ງຂອງກົມໃຫຍ່ເຕັກນິກກອງທັບ.

<u>ມາດຕາ 4</u>: ກະຊວງປ້ອງກັນປະເທດ, ບັນດາກະຊວງ - ອົງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 5</u>: ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ